ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC
ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສໍານັກງານໃຫຍ່

ເລກທີ: 080 /ທຄຕລ .2021........
ນະຄອນຫຼວງວຽງຈັນ, ວັນທີ: 07 SEP 2021

# ໜັງສືແຈ້ງເຊີນ

**ເຖິງ:** ບັນດາບໍລິສັດ, ຫ້າງຮ້ານຕົວແທນຈໍາໜ່າຍ ສິນຄ້າເຄື່ອງທີ່ລະນຶກ ຢູ່ໃນນະຄອນຫຼວງວຽງຈັນ.
**ເລື່ອງ:** ເຊີນເຂົ້າຮ່ວມການປະມູນລາຄາ ເຄື່ອງທີ່ລະນຶກ ຂອງ ທຄຕລ.

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ຂໍແຈ້ງເຊີນມາຍັງບັນດາບໍລິສັດ, ຫ້າງຮ້ານຕົວແທນຈໍາໜ່າຍ ທີ່ມີຄວາມສົນໃຈເຂົ້າຮ່ວມປະມູນລາຄາ ເຄື່ອງທີ່ລະນຶກ ຂອງ ທຄຕລ ຕາມລາຍລະອຽດລຸ່ມນີ້:

| ລ/ດ | ລາຍການ | ລາຍລະອຽດສິນຄ້າ | ຈໍານວນ |
|---|---|---|---|
| 1 | **ຖົງເກັບອຸນຫະພູມ**<br>- ຂະໜາດ 26*16*19 cm<br>- ສະກຼີນໂລໂກ້ 4 ສີ 1 ຈຸດ (4,5*2,4 cm) |  | 1.000<br>ອັນ |
| 2 | **ຊຸດຂອງຂວັນ: Power bank + USB + ບິກ (ink) + ສະກຼີນໂລໂກ້ 1 ສີ 1 ຈຸດ**<br>- ພາວເວີແບັງ 10.000 mAh<br>- USB 8 GB<br>- ກ່ອງເຈ້ຍ ຂະໜາດ 168*202*38 mm, ສີແດງ-ຂາວ, ພິມໂລໂກ້ 4 ສີ 1 ຈຸດ |  | 250<br>ກັບ |
| 3 | **ຖົງຜ້າ**<br>- ຂະໜາດ 36*39*12 cm<br>28*34*12 cm (ຕອນພັບ)<br>- ເນື້ອກະເປົາແບບແຄນວາດ (Cavan)<br>- ສະກຼີນໂລໂກ້ 4 ສີ 1 ຈຸດ (8,96*4,62 cm) |  | 2.000<br>ຖົງ |

- **ເງື່ອນໄຂຂອງຜູ້ສະໜອງທີ່ຕ້ອງການຍື່ນຊອງປະມູນຕ້ອງປະກອບດັ່ງນີ້:**

❖ **<u>ເອກະສານຊອງທີ 1 (ບໍ່ປິດຊອງ):</u>**

1. ປະກອບເອກະສານໃນນາມນິຕິບຸກຄົນ ທີ່ດຳເນີນທຸລະກິດກ່ຽວກັບເຄື່ອງທີ່ລະນຶກ ແລະ ດຳເນີນທຸລະກິດຢ່າງໜ້ອຍ 1 ປີຂຶ້ນໄປ, ພ້ອມທັງສຳເນົາໃບທະບຽນວິສາຫະກິດ, ໃບອະນຸຍາດດຳເນີນທຸລະກິດປະຈຳປີ 2021, ໃບຢັ້ງຢືນການເສຍອາກອນປະຈຳປີ 2020 ແລະ ເອກະສານກ່ຽວກັບຜົນງານການຜະລິດເຄື່ອງທີ່ລະນຶກຜ່ານມາ ແລະ ຖືຕົວຢ່າງມາພ້ອມ ຢ່າງລະ 1 ອັນ.
2. ກຳນົດລາຍລະອຽດສິນຄ້າຕາມສະເປັກຂ້າງເທິງ ພ້ອມທັງລະບຸເວລາການຈັດສົ່ງ, ການຮັບປະກັນສິນຄ້າ.
3. ກຳນົດຍື່ນຊອງ ກ່ອນວັນຈັນ, ວັນທີ **13/09/2021 ເວລາ 11:00** ໂມງ ທີ່ພະແນກຫ້ອງການບໍລິຫານ-ການເງິນ ສຳນັກງານໃຫຍ່, ປ່ອງບໍລິການຂາເຂົ້າ-ຂາອອກ ຊັ້ນ 4 ຕຶກ C.

❖ **<u>ເອກະສານຊອງທີ 2 (ປິດຊອງ)</u>**:

1. ໃບສະເໜີລາຄາໃຫ້ລະບຸເປັນສະກຸນເງິນກີບ, ລາຄາຫົວໜ່ວຍແຕ່ລະລາຍການ ແລະ ລວມອາກອນມູນຄ່າເພີ່ມໃຫ້ຄົບຖ້ວນ.
2. ວັນສຸກ, ທີ **17/09/2021 ເວລາ 9:30** ໂມງ ແມ່ນມື້ເປີດຊອງປະມູນ, ສະນັ້ນ ບໍລິສັດ / ຮ້ານຕົວແທນຈຳໜ່າຍຈະຕ້ອງຖືຊອງລາຄາມາດ້ວຍຕົນເອງ ຫຼື ສົ່ງຜູ້ຕາງໜ້າເຂົ້າຮ່ວມທີ່ຫ້ອງປະຊຸມຊັ້ນ 3 ຕຶກ C.
3. ບໍລິສັດຜູ້ສະໜອງຕ້ອງກຳນົດສະເປັກ ພ້ອມທັງລະບຸເງື່ອນໄຂຕ່າງໆ ມາໃຫ້ຄົບຖ້ວນ ແລະ ໃຫ້ກົງກັບຄວາມຕ້ອງການໃນຕາຕະລາງຂ້າງເທິງນັ້ນ.
4. ຜູ້ສະໜອງຕ້ອງວາງເງິນຄ້ຳປະກັນການປະມູນຕ່ຳສຸດ 2% ຂອງມູນຄ່າທັງໝົດ ໂດຍໜັງສືຄ້ຳປະກັນທີ່ອອກໂດຍທະນາຄານພາຍໃນ **(ວັນໝົດອາຍຸໜັງສືຄ້ຳປະກັນຕ້ອງເຖິງ ວັນທີ 17/10/2021)** ຫຼື ແຊັກທີ່ວີຊ້າແລ້ວ (ທຄຕລ ບໍ່ຮັບເງິນສົດ), ພາຍຫຼັງປະກາດຜົນ ທຄຕລ ຈະສົ່ງໜັງສືຄ້ຳປະກັນດັ່ງກ່າວຄືນ.

**<u>ໝາຍເຫດ:</u>** ທຄຕລ ຂໍສະຫງວນສິດ ປະຕິເສດຜູ້ສະໜອງທີ່ປະກອບເອກະສານ ບໍ່ຄົບຖ້ວນ ຫຼື ບໍ່ຖືກຕ້ອງຕາມການກຳນົດຂ້າງເທິງ.

❖ **ເງື່ອນໄຂຂອງສັນຍາລະຫວ່າງ ທຄຕລ ແລະ ຜູ້ສະໜອງທີ່ຊະນະການປະມູນ:**

- ຖ້າຜູ້ຊະນະການປະມູນປະຕິເສດການເຊັນສັນຍາ ຫຼື ບໍ່ຍື່ນເງິນຄ້ຳປະກັນການປະຕິບັດສັນຍາ ຜູ້ຊະນະການປະມູນຕ້ອງໄດ້ຈ່າຍຄ່າເສຍຫາຍໃຫ້ແກ່ ທຄຕລ ໃນອັດຕາ 2% ຂອງມູນຄ່າລວມທີ່ສະເໜີປະມູນ.
- ຜູ້ທີ່ຊະນະການປະມູນຈະໄດ້ເຊັນສັນຍາກັບ ທຄຕລ ແລະ ຄ່າທຳນຽມໃນການຈົດທະບຽນສັນຍາ ແມ່ນມອບໃຫ້ເປັນຄວາມຮັບຜິດຊອບຂອງຜູ້ສະໜອງ.

❖ **ການຊຳລະ:** ທຄຕລ ຈະຊຳລະງວດດຽວ 100% ຂອງມູນຄ່າ ພາຍຫຼັງສົ່ງເຄື່ອງຄົບຕາມຈຳນວນ ແລະ ຜ່ານການກວດກາຄວາມຖືກຕ້ອງຈາກ ຄະນະກຳມະການຂອງ ທຄຕລ ພາຍໃນ 30 ວັນລັດຖະການ.

ດັ່ງນັ້ນ, ຈຶ່ງອອກແຈ້ງເຊີນມາຍັງທ່ານທີ່ມີຄວາມສົນໃຈເຂົ້າຮ່ວມຍື່ນຊອງປະມູນໃນຄັ້ງນີ້.

ຜູ້ອຳນວຍການ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

ທະນາຄານ ການຄ້າຕ່າງປະເທດລາວ ມະຫາຊົນ BANQUE POUR LE COMMERCE EXTERIEUR LAO PUBLIC

ຄຳພຸດ ສິດທິລາດ

# (ຕົວຢ່າງ) ລາຍລະອຽດເອກະສານການປະມູນ (ກະລຸນາຕື່ມຂໍ້ມູນ ແລະ ເຊັນຢັ້ງຢືນ)

- ອີງຕາມໃບແຈ້ງປະມູນ ສະບັບເລກທີ ............/ທຄຕລ, ລົງວັນທີ ......................

| ລ/ດ | ຜູ້ສະໜອງ | ເງື່ອນໄຂ | | | | | | | | | ໝາຍເຫດ |
|---|---|---|---|---|---|---|---|---|---|---|---|
| | | ໃບທະບຽນວິສາຫະກິດ | ໃບຢັ້ງຢືນການເສຍອາກອນ 2020 | ໃບອະນຸຍາດດໍາເນີນທຸລະກິດ 2021 | ໄລຍະເວລາໃນການດໍາເນີນທຸລະກິດ | ຜົນງານຜ່ານມາ (ເຄີຍສະໜອງໃຫ້ພາກສ່ວນໃດແນ່) | ປະເພດ / ວັດສະດຸ / ຍີ່ຫໍ້ສິນຄ້າ | ປະເທດຜະລິດ | ການຮັບປະກັນສິນຄ້າ | ກໍານົດສົ່ງ (ວັນ) | |
| 1 | ບ/ສ......... | (xxx/ 02.01.2015) | (xxx/ 02.01.2015) | (xxx/ 02.01.2015) | .... ປີ | (ໃຫ້ລະບຸ) | (ໃຫ້ລະບຸລະອຽດ) | ປະເທດ....... | .... ປີ | ...... | |

ໝາຍເຫດ: ຂໍ້ມູນທີ່ແຈ້ງຂ້າງເທິງນີ້ ເປັນຄວາມຈິງທຸກປະການ, ຖ້າມີຂໍ້ມູນຜິດພາດ ຂ້າພະເຈົ້າຂໍຮັບຜິດຊອບເອງທຸກປະການ.

ນະຄອນຫຼວງວຽງຈັນ, ວັນທີ .......................
ຜູ້ອໍານວຍການບໍລິສັດ

ຜູ້ປະສານງານບໍລິສັດ:
ຊື່:
ໂທ: